ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ
LAO CEMENT PUBLIC COMPANY

ຖະໜົນ ໜອງບອນ ວຽງຈັນ, ສ. ປ. ປ. ລາວ ຕູ້ ປ.ນ 6821, ໂທຣ: (856-21) 412111, 451116 ແຟັກ: 263120, 451222
NONGBONE RD, VIENTIANE, LAO P.D.R P.O.BOX 6821, TEL: (856-21) 412111, 451116 FAX: 263120, 451222
E-mail: Lcc@laocement.com, www.laocement.com

ເລກທີ 129/ບຊລ

ນະຄອນຫລວງວຽງຈັນ, ວັນທີ 10 MAY 2019

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018
ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ)

ປະຊຸມເມື່ອວັນທີ 30/04/2019 ເວລາ 14,00 ໂມງ ທີ່ຫ້ອງປະຊຸມຊັ້ນ 08 ອາຄານຕະຫຼາດຫຼັກຊັບລາວ ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ, ເປັນປະທານກອງປະຊຸມໂດຍທ່ານ ຫຼີວເຫວີຍ ປະທານ ສະພາບໍລິຫານ ບຊລ ຊຶ່ງມີຜູ້ເຂົ້າຮ່ວມກອງປະຊຸມທັງໝົດ 41 ທ່ານ, ໃນນີ້ມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມ 22ທ່ານ ແລະມອບສັນທະ 06 ທ່ານ, ມີຮຸ້ນລວມກັນທັງໝົດ 35,528,900ຮຸ້ນ ເທົ່າກັບ 89ສ່ວນຮ້ອຍຂອງ ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະກົດລະບຽບຂອງບໍລິສັດ.

I. ເລຂາກອງປະຊຸມໄດ້ກ່າວຕ້ອນຮັບແຂກ ແລະແນະນຳຜູ້ທີ່ເຂົ້າຮ່ວມປະຊຸມ ດັ່ງນີ້ :

1. ທ່ານ ອັນຄຳ ວໍລະວົງ ຕຳແໜ່ງ : ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ
2. ທ່ານ ຫຼີວເຫວີຍ ຕຳແໜ່ງ : ປະທານສະພາບໍລິຫານ ບຊລ , ຜູ້ອຳນວຍການໃຫ່ຍ ບໍລິສັດ ຢູນນານສາກົນ (ຊີວາຍຊີ)
3. ທ່ານ ບຸນແປງ ບົວພັນ ຕຳແໜ່ງ : ຮອງປະທານສະພາບໍລິຫານ ບຊລ, ຜູ້ອຳນວຍການໃຫ່ຍ ລັດວິສາຫະກິດ ພກອ
4. ທ່ານ ຈ່າງລີ້ ຕຳແໜ່ງ : ກຳມະການສະພາບໍລິຫານ, ຜູ້ອຳນວຍການ ບຊລ,
5. ທ່ານ ຄຳບົນ ໄຊເລົ່າວົງ ຕຳແໜ່ງ : ກຳມະການສະພາບໍລິຫານ ບຊລ, ຮອງຜູ້ອຳນວຍການ ລັດວິສາຫະກິດ ພກອ
6. ທ່ານ ວັນທອງ ສິດທິກຸນ ຕຳແໜ່ງ : ຮອງຜູ້ອຳນວຍການ ລັດວິສາຫະກິດ ພກອ,
7. ທ່ານ ທອງປົນ ກິ່ງຄຳເພັດ ຕຳແໜ່ງ : ກຳມະການສະພາບໍລິຫານ, ຮອງຜູ້ອຳນວຍການ ບຊລ
8. ທ່ານ ເຈ້ຍ ຢ້າວຊີ ຕຳແໜ່ງ : ກຳມະການສະພາບໍລິຫານ ບຊລ,
9. ທ່ານ ຟົງສະຫວັດ ຕຳແໜ່ງ : ຫົວໜ້າພະແນກທີ່ປຶກສາດ້ານການເງິນ ບໍລິສັດ ຫຼັກຊັບລາວ-ຈີນ
10. ທ່ານ ຫຼີມິງ ຕຳແໜ່ງ : ກຳມະການສະພາບໍລິຫານ ບຊລ
11. ທ່ານ ສຽວເຈ ຕຳແໜ່ງ : ກຳມະການສະພາບໍລິຫານ ບຊລ

12. ທ່ານ ຫຼີຊຸນໂປ ຕຳແໜ່ງ : ກຳມະການອິດສະຫຼະ ບຊລ
13. ທ່ານ ວິງວິຈິດ ແກ້ວວິງກິດ ຕຳແໜ່ງ : ກຳມະການອິດສະຫຼະ ບຊລ
14. ທ່ານ ນ ອາລຸນນາ ສີວິງທອງ ຕຳແໜ່ງ : ຮອງຫົວໜ້າພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ ສຳນັກງານ ຄຄຊ
15. ທ່ານ ນ ວັນນະພອນ ສຸນັນທາ ຕຳແໜ່ງ : ວິຊາການພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບສຳ ນັກງານຄຄຊ
16. ທ່ານ ສຸກສັນຍາ ແພງດີ ຕຳແໜ່ງ : ວິຊາການພະແນກຈົດທະບຽນ ແລະເປີດເຜີຍຂໍ້ມູນ ຕລຊລ
17. ທ່ານ ສິນທະນູ ສົມພອງບຸດຕະຂັນ ຕຳແໜ່ງ : ຮອງຫົວໜ້າພະແນກບໍລິຫານ-ຈັດຕັ້ງ ຕາງໜ້າຜູ້ຖືຮຸ້ນລາຍ ຍ່ອຍ

II. ສະເໜີກ່ຽວກັບລະບຽບ, ວິທີການລົງຄະແນນສຽງ ໃຫ້ທີ່ປະຊຸມຊາບ ຊຶ່ງມີລະອຽດດັ່ງລຸ່ມນີ້ :

1.ການລົງຄະແນນສຽງ :

1) ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
2) ໃນການລົງຄະແນນສຽງ,ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້,ໃນນັ້ນຕ້ອງ ລະບຸຢ່າງຈະແຈ້ງກ່ຽວກັບ ຊື່ ແລະ ນາມສະກຸນຂອງທ່ານ,ຈຳນວນຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ ທີ່ທ່ານຖືຢູ່ ແລະ ໃຫ້ໝາຍຕີນກາໃສ່ຫ້ອງບໍ່ເຫັນດີ.
3) ກໍລະນີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ກາເຄື່ອງໝາຍໃສ່ຊ່ອງບໍ່ເຫັນດີໃນບັດລົງຄະແນນ ແລ້ວຍົກບັດນັ້ນຂຶ້ນ ເພື່ອໃຫ້ພະນັກງານນຳໄປກວດນັບຄະແນນສຽງໃນອາລະນັ້ນໆ ແລະສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກຂຶ້ນ ຈະຖືວ່າ ເຫັນດີຕາມທີ່ສະເໜີໃນກອງປະຊຸມ,ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສັນທະໄວ້ ຢ່າງຈະແຈ້ງແລ້ວ, ຊຶ່ງບໍລິສັດ ໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.
4) ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນນັ້ນ ແມ່ນໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນທີ່ໄດ້ລະບຸໄວ້ໃນໃບມອບສັນທະນັ້ນ,

2. ການນັບແລະການແຈ້ງຜົນການລົງຄະແນນສຽງ

1) ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ,ໂດຍການນັບຄະແນນສຽງຈະຖືເອົາ ໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.
2) ການລົງຄະແນນສຽງບໍ່ເຫັນດີ ຈະມີຜົນສັກສິດກໍ່ຕໍ່ເມື່ອມີຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນ ຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນທັງໝົດໃນທີ່ປະຊຸມ ດັ່ງທີ່ໄດ້ກຳນົດໃນມາດຕາ 143 ຂອງກົດໝາຍ ວ່າດ້ວຍລັດວິສະຫະກິດ.
3) ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າທີ່ມາເຂົ້າຮ່ວມກອງປະຊຸມ ແລະລົງ ຄະແນນສຽງໃນແຕ່ລະວາລະ,

4) ທ່ານ ຫຼີ ຊຸນໂປ ຜູ້ຄວບຄຸມຄະແນນກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະໃຫ້ກອງປະຊຸມຮັບຊາບ ຫລັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນລົງ ໂດຍຈະແຍກຄະແນນເຫັນດີ ແລະບໍ່ເຫັນດີເປັນຈຳນວນສຽງ ແລະເປັນຈຳນວນຈັກສ່ວນຮ້ອຍ,
5) ສຳລັບຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ຫຼັງຈາກທີ່ຜູ້ຄວບຄຸມຄະແນນໄດ້ປະກາດຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ໂດຍອີງຕາມລະບຽບ ແລະກົດໝາຍທີ່ກ່ຽວຂ້ອງ ໃນກອງປະຊຸມຄັ້ງນີ້ແມ່ນບໍ່ອະນຸຍາດໃຫ້ຜູ້ສັງເກດການ ມີຄຳຖາມໃນເວລາດຳເນີນກອງປະຊຸມ, ມີພຽງແຕ່ຜູ້ຖືຮຸ້ນເທົ່ານັ້ນມີສິດຕັ້ງຄຳຖາມ ແລະປະກອບຄຳເຫັນກ່ຽວກັບວາລະກອງປະຊຸມ,

III. ສະເໜີວາລະຂອງການປະຊຸມ

ວາລະທີ 1 : ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ

ວາລະທີ 2 : ພິຈາລະນາ ແລະຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017

ວາລະທີ 3 : ພິຈາລະນາ ແລະຮັບຮອງຜົນການດຳເນີນທຸລະກິດ ປະຈຳປີ 2018

ວາລະທີ 4 : ພິຈາລະນາ ແລະຮັບຮອງ ບົດລາຍງານການເງິນປີ 2018

ວາລະທີ 5 : ພິຈາລະນາ ແລະຮັບຮອງທິດທາງການປັນຜົນ ປີ 2018

ວາລະທີ 6 : ພິຈາລະນາ ແລະຮັບຮອງ ບົດລາຍງານແຜນການດຳເນີນທຸລະກິດຂອງ ບຊລ ປີ 2019

ວາລະທີ 7 : ພິຈາລະນາການຮັບຮອງການລາອອກຈາກຕຳແໜ່ງ ຂອງບັນດາຄະນະກຳມະການຄັດເລືອກ, ກຳມະການບໍລິຫານຄວາມສ່ຽງ ແລະ ກຳມະການລາຍການທີ່ກ່ຽວພັນ.

ວາລະທີ 8 : ພິຈາລະນາການຮັບຮອງການແຕ່ງຕັ້ງ ຂອງບັນດາຄະນະກຳມະການຄັດເລືອກ, ກຳມະການບໍລິຫານຄວາມສ່ຽງ ແລະ ກຳມະການລາຍການທີ່ກ່ຽວພັນ.

ວາລະທີ 9 : ພິຈາລະນາ ແລະຮັບຮອງ ການວ່າຈ້າງບໍລິສັດກວດສອບ EY

ເວລາຕໍ່ມາ, ທ່ານ ຫຼີວເຫວີຍ ປະທານກອງປະຊຸມໄດ້ເລີ່ມເຂົ້າສູ່ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ໂດຍມອບໃຫ້ຜູ່ທີ່ກ່ຽວຂ້ອງລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດ ດັ່ງລຸ່ມນີ້ :

ວາລະທີ 1 : ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ

ຮອງຜູ້ອຳນວຍການ ບໍລິສັດ (ທ່ານ ທອງປົນ ກິ່ງຄຳພັດ) ໄດ້ລາຍງານມະຕິກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີຜ່ານມາໃຫ້ບັນດາຜູ້ຖືຮຸ້ນຮັບຊາບ, ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແຕ່ຜູ້ຖືຮຸ້ນບໍ່ມີການສອບຖາມ, ສ່ວນວາລະນີ້ບໍ່ໄດ້ມີການລົງຄະແນນສຽງ ລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ.

ວາລະທີ 2 :ພິຈາລະນາ ແລະຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017

ຮອງຜູ້ອຳນວຍການ ບໍລິສັດ (ທ່ານ ທອງປົນ ກິ່ງຄຳພັດ) ໄດ້ລາຍງານບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ໃຫ້ບັນດາຜູ້ຖືຮຸ້ນຮັບຊາບ,ດັ່ງມີລາຍລະອຽດໃນ**ເອກະສານຄັດຕິດ 02**,ທີ່ໄດ້ຄັດຕິດກັບໜັງສື

ແຈ້ງເຊີນ, ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະກອງປະຊຸມສະພາບໍລິຫານ ບຊລ ກໍໄດ້ຮັບຮອງຄວາມຖືກຕ້ອງແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ. ດັ່ງນັ້ນ,ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນ, ແຕ່ຜູ້ຖືຮຸ້ນທ່ານໃດປະກອບຄຳຄິດເຫັນ, ຜົນສະຫຼຸບການລົງຄະແນນສຽງວາລະນີ້ເຫັນດີຈຳນວນ 35,528,900 ສຽງເທົ່າກັບ 100%, ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3 :ພິຈາລະນາ ແລະຮັບຮອງຜົນການດຳເນີນທຸລະກິດ ປະຈຳປີ 2018

ຜູ້ອຳນວຍການບໍລິສັດ (ທ່ານ ຈ່າງລີ້) ໄດ້ລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2018 ເພື່ອໃຫ້ຜູ້ຖືຮຸ້ນຮັບຊາບເຖິງຜົນການສຳເລັດຂອງທຸລະກິດຂອງບໍລິສັດ ໃນຜ່ານມາ ດັ່ງມີລາຍລະອຽດໃນ<u>**ເອກະສານຄັດຕິດ 03:**</u> ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບແລະກອງປະຊຸມສະພາບໍລິຫານ ບຊລ ກໍໄດ້ຮັບຮອງຄວາມຖືກຕ້ອງແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ.ດັ່ງນັ້ນ, ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນ, ແຕ່ຜູ້ຖືຮຸ້ນທ່ານໃດປະກອບຄຳຄິດເຫັນຜົນສະຫຼຸບການລົງຄະແນນສຽງວາລະນີ້ ເຫັນດີໃນຈຳນວນ 35,528,900 ສຽງ ເທົ່າກັບ 100 ສ່ວນຮ້ອຍ, ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4 : ພິຈາລະນາ ແລະຮັບຮອງ ບົດລາຍງານການເງິນປີ 2018

ຫົວໜ້າພະແນກບັນຊີ-ການເງິນ (ທ່ານ ຈ່າງຢົງຟູ) ໄດ້ສະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະຮັບຮອງ ກ່ຽວກັບ ບົດລາຍງານການເງິນປີ 2018 ດັ່ງມີລາຍລະອຽດໃນ<u>**ເອກະສານຄັດຕິດ 04**</u> ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ໄດ້ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະກອງປະຊຸມສະພາບໍລິຫານກໍໄດ້ຮັບຮອງຄວາມຖືກຕ້ອງ,ຄົບຖ້ວນແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ. ດັ່ງນັ້ນ,ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຄິດເຫັນ,ຜົນສະຫຼຸບການລົງຄະແນນສຽງວາລະນີ້ ເຫັນດີໃນຈຳນວນ 35,528,900 ສຽງ ເທົ່າກັບ 100 ສ່ວນຮ້ອຍ, ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5 : ພິຈາລະນາ ແລະຮັບຮອງທິດທາງການປັນຜົນ ປີ 2018

ຫົວໜ້າພະແນກບັນຊີ-ການເງິນ (ທ່ານ ຈ່າງຢົງຟູ) ໄດ້ສະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະຮັບຮອງ ກ່ຽວກັບທິດທາງການປັນຜົນປີ 2018 ດັ່ງມີລາຍລະອຽດໃນ<u>**ເອກະສານຄັດຕິດ 05**</u>ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ ແລະ ໄດ້ເປີດເຜີຍໃນເວັບໄຊຂອງ ຕະຫຼາດຫຼັກຊັບແລ້ວ ແລະກອງປະຊຸມສະພາບໍລິຫານໄດ້ຮັບຮອງຄວາມຖືກຕ້ອງ ຄົບຖ້ວນແລ້ວ,ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງ.

ໂດຍກຳນົດວັນບັນທຶກບັນຊີທະບຽນຜູ້ຖືຮຸ້ນ ໃນວັນທີ 19/04/2019ເພື່ອກຳນົດສິດຮັບເງິນປັນຜົນຂອງຜູ້ຖືຮຸ້ນບໍລິສັດ ຊີມັ້ງລາວ ມະຫາຊົນ ປະຈຳປີ 2018 ແລະກຳນົດມື້ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນໃນວັນທີ 30/05/2019.

ດັ່ງນັ້ນ,ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຄິດເຫັນ, ຜົນສະຫຼຸບການລົງຄະແນນສຽງວາລະນີ້ ເຫັນດີໃນຈຳນວນ 35,528,900 ສຽງ ເທົ່າກັບ 100 ສ່ວນຮ້ອຍບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6 : ພິຈາລະນາ ແລະຮັບຮອງ ບົດລາຍງານແຜນການດຳເນີນທຸລະກິດຂອງ ບຊລ ປີ 2019

ຜູ້ອຳນວຍການ ບໍລິສັດ(ທ່ານ ຈ່າງລີ) ໄດ້ສະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະຮັບຮອງກ່ຽວກັບບົດລາຍງານແຜນການດຳເນີນທຸລະກິດຂອງ ບຊລ ປີ 2019 ດັ່ງມີລາຍລະອຽດໃນ<u>ເອກະສານຄັດຕິດ 06</u>ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ໄດ້ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບແລະກອງປະຊຸມສະພາບໍລິຫານກໍໄດ້ຮັບຮອງຄວາມຖືກຕ້ອງ, ຄົບຖ້ວນແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມພິຈາລະນາ ແລະຮັບຮອງ. ດັ່ງນັ້ນ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຄິດເຫັນ ,ຜົນສະຫຼຸບການລົງຄະແນນສຽງວາລະນີ້ ເຫັນດີໃນຈຳນວນ 35,528,900 ສຽງ ເທົ່າກັບ 100 ສ່ວນຮ້ອຍ, ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7 : ພິຈາລະນາການຮັບຮອງການລາອອກຈາກຕຳແໜ່ງ ຂອງບັນດາຄະນະກຳມະການຄັດເລືອກ, ກຳມະການບໍລິຫານຄວາມສ່ຽງ ແລະ ກຳມະການລາຍການທີ່ກ່ຽວພັນ.

ຜູ້ອຳນວຍການ ບໍລິສັດ (ທ່ານ ຈ່າງລີ) ໄດ້ສະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະຮັບຮອງກ່ຽວກັບການລາຈາກຕຳແໜ່ງຂອງບັນດາຄະນະກຳມະການຄັດເລືອກ, ກຳມະການບໍລິຫານຄວາມສ່ຽງ ແລະກຳມະການລາຍການທີ່ກ່ຽວພັນຊຶ່ງກອງປະຊຸມສະພາບໍລິຫານກໍໄດ້ຮັບຮອງຄວາມຖືກຕ້ອງ, ຄົບຖ້ວນແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມພິຈາລະນາ ແລະຮັບຮອງ.

ຄະນະກຳມະການຊຸດກ່ອນ:

1. ທ່ານ ມາຊານ	ສະມາຊິກຄະນະກຳມະການຄັດເລືອກ
2. ທ່ານ ຈັນທະວີໄລໄຊຍະລາດ	ສະມາຊິກຄະນະກຳມະການຄັດເລືອກ ແລະ ລາຍການທີ່ກ່ຽວພັນ
3. ທ່ານ ເສີນເຫວີຍ	ສະມາຊິກຄະນະກຳມະການບໍລິຫານຄວາມສ່ຽງ

ດັ່ງນັ້ນ,ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຄິດເຫັນ, ຜົນສະຫຼຸບການລົງຄະແນນສຽງວາລະນີ້ ເຫັນດີໃນຈຳນວນ 35,528,900 ສຽງ ເທົ່າກັບ 100 ສ່ວນຮ້ອຍ, ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 8 : ພິຈາລະນາການຮັບຮອງການແຕ່ງຕັ້ງຂອງບັນດາຄະນະກຳມະການຄັດເລືອກ, ກຳມະການບໍລິຫານຄວາມສ່ຽງ ແລະ ກຳມະການລາຍການທີ່ກ່ຽວພັນ.

ຜູ້ອຳນວຍການ ບໍລິສັດ (ທ່ານ ຈ່າງລີ) ໄດ້ສະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະຮັບຮອງກ່ຽວກັບການແຕ່ງຕັ້ງບັນດາຄະນະກຳມະການຄັດເລືອກ, ກຳມະການບໍລິຫານຄວາມສ່ຽງ ແລະກຳມະການລາຍການທີ່ກ່ຽວພັນ ດັ່ງມີລາຍລະອຽດໃນ <u>ເອກະສານຄັດຕິດ 07</u> ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ໄດ້ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບແລະກອງປະຊຸມສະພາບໍລິຫານກໍໄດ້ຮັບຮອງຄວາມຖືກຕ້ອງ, ຄົບຖ້ວນແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມພິຈາລະນາ ແລະຮັບຮອງ.

ຄະນະກຳມະການຊຸດໃໝ່ :

1. ທ່ານ ເຈີ້ຍຢ້າວຊິ	ສະມາຊິກຄະນະກຳມະການຄັດເລືອກ
2. ທ່ານ ຄຳຜາງ ສຸກແສງດາວ	ສະມາຊິກຄະນະກຳມະການຄັດເລືອກ ແລະ ລາຍການທີ່ກ່ຽວພັນ
3. ທ່ານ ຈ່າງ ຢົງຟູ	ສະມາຊິກຄະນະກຳມະການບໍລິຫານຄວາມສ່ຽງ

ດັ່ງນັ້ນ,ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຄິດເຫັນແຕ່ຢ່າງໃດ, ຜົນສະຫຼຸບການລົງຄະແນນສຽງວາລະນີ້ ເຫັນດີໃນຈຳນວນ 35,528,900 ສຽງ ເທົ່າກັບ 100 ສ່ວນຮ້ອຍ, ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 9 : ພິຈາລະນາ ແລະຮັບຮອງ ການວ່າຈ້າງບໍລິສັດກວດສອບEY

ຫົວໜ້າພະແນກບັນຊີ-ການເງິນ (ທ່ານ ຈ່າງ ຢົງຟູ) ໄດ້ສະເໜີຕໍ່ທີ່ປະຊຸມພິຈາລະນາ ແລະຮັບຮອງ ກ່ຽວກັບ ການວ່າຈ້າງບໍລິສັດກວດສອບຈາກພາຍນອກແຕ່ປີ 2018-2020ຊຶ່ງຄ່າບໍລິການປີລະ 31,600 ໂດລາ ໃນໄລຍະ 3 ປີ ແຕ່ປີ 2018-2020 ແມ່ນ 94,800 ໂດລາສະຫະລັດ (ລວມອາກອນ) ໄດ້ມີການລາຍງານໃນກອງປະຊຸມສະພາບໍລິຫານຄັ້ງວັນທີ 10/4/2019ແລະກອງປະຊຸມສະພາບໍລິຫານກໍໄດ້ຮັບຮອງຄວາມຖືກຕ້ອງ, ຄົບຖ້ວນແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງ.ດັ່ງນັ້ນ,ປະທານກອງປະຊຸມໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ຫຼືມີຄຳຖາມ, ແຕ່ບໍ່ມີຜູ້ຖືຮຸ້ນໃດມີຄຳເຫັນ,ສ່ວນວາລະນີ້ບໍ່ໄດ້ມີການລົງຄະແນນສຽງ ລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ.

ຜ່ານການລາຍງານໃນກອງປະຊຸມສາມັນຜູ້ຖືຮຸ້ນມີທັງໝົດ 9 ວາລະ ແລະ 2 ວາລະ ບໍ່ໄດ້ມີການລົງຄະແນນສຽງ ແມ່ນຜ່ານໄປດ້ວຍຜົນສຳເລັດອັນຈົບງາມ.

ຈາກນັ້ນ, ປະທານກອງປະຊຸມໄດ້ກ່າວອວຍພອນໄຊບັນດາທ່ານຄະນະປະທານ, ຜູ້ຖືຮຸ້ນ, ກຳມະການສະພາບໍລິຫານແລະແຂກທີ່ມີກຽດທຸກທ່ານ ພ້ອມກ່າວປິດກອງປະຊຸມໃນເວລາ 15:30 ໂມງ ຂອງວັນດຽວກັນ.

ປະທານກອງປະຊຸມ

ຫຼີ່ວເຫວີ່ຍ

ຜູ້ບັນທຶກ

ຈ້າວ ຊິງເສີ່ງ

ໝາຍເຫດ : ບົດບັນທຶກສະບັບນີ້ໃຫ້ຖືເອົາສະບັບພາສາລາວເປັນຫຼັກ